ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ 47 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 07 ມີນາ 2019

# ແຈ້ງການ

ເຖິງ: ພໍ່ແມ່ປະຊາຊົນ, ຊາວຄ້າຂາຍ, ພະນັກງານ, ທະຫານ ແລະ ຕຳຫຼວດ ໃນຂອບເຂດທົ່ວປະເທດ.

ເລື່ອງ: ແຈ້ງລາຍຊື່ທະນາຄານທຸລະກິດ, ສະຖາບັນການເງິນ ແລະ ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດໃຫ້ບໍລິການຮັບຊຳລະຄ່າສິນຄ້າ ແລະ ບໍລິການ ຜ່ານທາງເອເລັກໂຕຣນິກ ຢູ່ ສປປ ລາວ.

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ກົດໝາຍວ່າດ້ວຍລະບົບການຊຳລະ ສະບັບເລກທີ 32/ສພຊ, ລົງວັນທີ 07 ພະຈິກ 2017;
- ອີງຕາມ ແຈ້ງການ ສະບັບເລກທີ 99/ຫກ, ລົງວັນທີ 30 ເມສາ 2018.

ຫ້ອງການ ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງ ພໍ່ແມ່ປະຊາຊົນ, ຊາວຄ້າຂາຍ, ພະນັກງານ, ທະຫານ ແລະ ຕຳຫຼວດ ໃນຂອບເຂດທົ່ວປະເທດ ຊາບວ່າ: ປັດຈຸບັນ ທະນາຄານແຫ່ງ ສປປ ລາວ ໄດ້ອອກອະນຸຍາດ ແລະ ເຫັນດີໃຫ້ ທະນາຄານທຸລະກິດ, ສະຖາບັນການເງິນ ແລະ ນິຕິບຸກຄົນ ທີ່ສາມາດໃຫ້ການບໍລິການຮັບຊຳລະຄ່າສິນຄ້າ ແລະ ບໍລິການ ຜ່ານທາງເອເລັກໂຕຣນິກ ຢູ່ ສປປ ລາວ ຊຶ່ງມີລາຍຊື່ ດັ່ງນີ້:

➢ **ການຊຳລະ ໂດຍນຳໃຊ້ Mobile Banking ຜ່ານ QR Code**
- ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (One Pay);
- ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ (LaoVietBank QR Pay);
- ທະນາຄານ ພັດທະນາລາວ ຈຳກັດ (LDB Pay);
- ທະນາຄານ ເອຊີລີດາ ຈຳກັດ (ການຊຳລະທັນໃຈ);
- ທະນາຄານ ຮ່ວມພັດທະນາ ຈຳກັດ (Yes Pay).

➢ **ການຊຳລະ ໃນຮູບແບບເງິນເອເລັກໂຕຣນິກ ຜ່ານ QR Code**
- ທະນາຄານ ກະສິກອນໄທ ຈຳກັດ (QR KBank) ໄດ້ຮັບອະນຸຍາດໃຫ້ທົດລອງໃຫ້ບໍລິການ.

➢ **ການຊຳລະ ໂດຍນຳໃຊ້ Alipay ແລະ WeChat Pay ຜ່ານ QR Code**
- ທະນາຄານ ຮ່ວມພັດທະນາ ຈຳກັດ ໄດ້ຮັບອະນຸຍາດໃຫ້ທົດລອງໃຫ້ບໍລິການ.

➢ **ການຊຳລະ ໃນຮູບແບບເງິນເອເລັກໂຕຣນິກ**
- ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ນິວຄອນເຊັບ (Kapao E-Wallet) ໄດ້ຮັບອະນຸຍາດໃຫ້ທົດລອງໃຫ້ບໍລິການ;

- ບໍລິສັດ ສະຕາຟິນເທັກ ຈໍາກັດຜູ້ດຽວ (U-Money) ໄດ້ຮັບອະນຸຍາດໃຫ້ທົດລອງໃຫ້ບໍລິການ.

ຖ້າທ່ານໃດພົບເຫັນ ທະນາຄານທຸລະກິດ, ສະຖາບັນການເງິນ, ນິຕິບຸກຄົນ ຫຼື ພາກສ່ວນອື່ນ ນອກຈາກທີ່ກ່າວມາຂ້າງເທິງເຄື່ອນໄຫວໃຫ້ບໍລິການຮັບຊໍາລະຄ່າສິນຄ້າ ແລະ ບໍລິການ ຢູ່ ສປປ ລາວ ກະລຸນາລະມັດລະວັງ, ບໍ່ຄວນໃຊ້ບໍລິການດັ່ງກ່າວ ແລະ ໃຫ້ແຈ້ງມາທີ່ ກົມຄຸ້ມຄອງລະບົບຊໍາລະສະສາງ ທະນາຄານແຫ່ງ ສປປ ລາວ.

ນອກຈາກນັ້ນ, ທ່ານສາມາດກວດສອບຂໍ້ມູນຂອງທະນາຄານທຸລະກິດ, ສະຖາບັນການເງິນ ແລະ ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດເປັນຜູ້ໃຫ້ບໍລິການຊໍາລະຢ່າງຖືກຕ້ອງຕາມລະບຽບ ແລະ ກົດໝາຍຂອງ ສປປ ລາວ ໄດ້ທີ່ເວັບໄຊຂອງທະນາຄານແຫ່ງ ສປປ ລາວ ໄດ້ທີ່ www.bol.gov.la ໂດຍເຂົ້າເບິ່ງ "ແຈ້ງການ ທຫລ" ຫຼື ສອບຖາມຂໍ້ມູນເພີ່ມຕື່ມ ທີ່ເບີໂທ 021 253596 ໃນໂມງລັດຖະການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງພໍ່ແມ່ປະຊາຊົນ, ຊາວຄ້າຂາຍ, ພະນັກງານ, ທະຫານ ແລະ ຕໍາຫຼວດ ໃນຂອບເຂດທົ່ວປະເທດເພື່ອຊາບ ແລະ ຈົ່ງມີສະຕິ ບໍ່ໃຫ້ຫຼົງເຊື່ອຕໍ່ການໂຄສະນາຊວນເຊື່ອຕ່າງໆຂອງພາກສ່ວນອື່ນທີ່ບໍ່ໄດ້ຮັບອະນຸຍາດຈາກທະນາຄານ ແຫ່ງ ສປປ ລາວ.

ຫົວໜ້າຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ